# ບົດເສັງຈົບມັດທາຍເຫຼັ້ມທີ 5

*ອ້ອນວອນ*

**1.** ໂມເຊສ້າງເຕັນສັກສິດໃນປີໃດ? (1400 ກ.ຄ.ສ.)

**2.** ພະເຢຊູເຂົ້າກຸງຢ່າງຜູ້ມີໄຊວັນໃດ? (ວັນອາທິດ)

**3.** ແມ່ນຜູ້ປະກາດພະທຳຄົນໃດທີ່ທຳນວາຍວ່າ ພະອົງຈະປະທັບເທິງຫຼັງລໍເຂົ້າກຸງ? (ຊາຂາລີຢາ)

**4.** ໃນວັນອັງຄານ ພະເຢຊູໂຕ້ຖຽງກັບຜູ້ນຳສາດສະໜາຢິວເລື່ອງຫຍັງ? (ສິດອຳນາດຂອງພະອົງ)

**5.** ພະບັນຍັດຂໍ້ໃຫຍ່ຄືຫຍັງ? (ຈົ່ງຮັກອົງພະຜູ້ເປັນເຈົ້າຂອງເຈົ້າໂດຍສຸດໃຈສຸດຈິດແລະໂດຍສຸດຄວາມຄິດ ຂອງເຈົ້າ)

**6.** ຄຳອຸປະມາທັງ 3 ປະການໃນມັດທາຍ ບົດ 21 ແລະ 22 ສອນເລື່ອງອານາຈັກໃດ? (ອານາຈັກສະຫວັນ)

**7.** ແມ່ນໃຜພະຍາຍາມຫຼອກລວງເຮົາໂດຍທາງຄວາມຄິດ? (ພະຍາມານ)

**8.** ເຮົາຈະໃຊ້ວິທີຮຽນໂດຍວັດຜົນ ເພື່ອແຍກຫຍັງຈາກຫຍັງ? (ດີຈາກຊົ່ວ)

**9.** ໃນເມື່ອພະເຈົ້າສ້າງມະນຸດ ຈິດໃຈ ຄວາມຄິດ ແລະ ກຳລັງ ຂອງຄົນນັ້ນເປັນຢ່າງໃດ? (ບໍລິບູນ ຫຼືບໍ່ມີຜິດກໍ ວ່າໄດ້)

**10.** ລັກສະນະອາລົມຈິດໃຈຂອງຄົນທີ່ຢູ່ໃຕ້ການປົກຄອງຂອງພະເຈົ້າເປັນຢ່າງໃດ? (ໝັ້ນຄົງສະເໝີ)

**11.** ຜູ້ທີ່ຕີຄວາມໝາຍຄຳທຳນວາຍເລື່ອງອະນາຄົດຕາມແບບ “ຫຼັງພັນປີ” ເຊື່ອວ່າສະພາບຂອງໂລກຈະເປັນ ຢ່າງໃດກ່ອນພະອົງຈະກັບມາ? (ໂລກຈະມີຄວາມສະຫງົບສຸກແລະຄວາມຍຸດຕິທຳ 1000 ປີ ແລ້ວພະເຢຊູຈະກັບມາອີກ)

**12.** ໃນຄຳອຸປະມາເລື່ອງສາວປອດ 10 ຄົນ ເຈົ້າບ່າວປຽບທຽບກັບໃຜ? (ພະເຢຊູ)

**13.** ທີ່ພະເຢຊູເທດສະໜາຢູ່ພູໝາກກອກເທດ ພະອົງເທດສະໜາເລື່ອງໃດເປັນຕົ້ນ? (ການພິພາກສາບັນດາ ປະຊາຊາດ ຫຼືທີ່ພະອົງກັບມາເທື່ອທີສອງກໍວ່າໄດ້)

**14.** ຕາມ ຢາໂກໂບ 4:17 ແມ່ນຄົນຢ່າງໃດທີ່ມີບາບ? (ຜູ້ທີ່ຮູ້ການດີ ແຕ່ບໍ່ເຮັດ)

**15.** ທີ່ຄຣິດສະຕຽນຈະຊ່ວຍຄົນທີ່ທຸກຍາກ ຄວນຈະຊ່ວຍໃນນາມຂອງໃຜ? (ນາມຂອງພະເຢຊູເຈົ້າ)

**16.** ຜູ້ທີ່ຮັບພາລະເປັນນາຍຄັງໃນຄຣິດສະຕະຈັກຄວນເປັນຄົນຊື່ສັດແລະມີຂອງປະທານໃນດ້ານໃດ? (ປົກຄອງ)

**17.** ຄວນມີຢ່າງນ້ອຍຈັກຄົນເພື່ອນັບເງິນຖະຫວາຍໃນຄຼິດສະຕະຈັກ? (2 ຄົນ)

**18.** ເປໂຕຫຼົງຜິດໃນຫຼາຍດ້ານກ່ອນຈະປະຕິເສດພະອົງ. ໃຫ້ທ່ານສະເໜີດ້ານໜຶ່ງກ່ອນ.
(ກ່າວຂັດແຍ້ງພະອົງ ຖືວ່າຕົນເອງດີກວ່າໝູ່ ຫຼື ໄວ້ໃຈໃນຕົນເອງ)

**19.** ຄຳວ່າ "ໂລກ" ມີຄວາມໝາຍ 2 ຢ່າງ. ຢ່າງໜຶ່ງຄື ແຜ່ນດິນໂລກແລະມີຄວາມໝາຍອີກຢ່າງໜຶ່ງຄືຫຍັງ? (ລະບົບຜູ້ຕໍ່ສູ້ພະເຈົ້າ)

**20.** ຖ້າເຮົາຮັກພະເຈົ້າ ແລະຖືຮັກສາພະທຳຂອງພະອົງຈະມີຜົນຮັບຢ່າງໃດ?
(ພະອົງຈະມາຕັ້ງຢູ່ກັບເຮົາ)

**21.** ໃນເມື່ອພະອົງຖືກພິພາກສາຕໍ່ໜ້າເຈົ້າໜ້າທີ່ຈັກກະພັດໂລມ ພະອົງຢືນຢູ່ຕໍ່ໜ້າສອງຄົນໃດ?
(ປີລາດ ແລະ ເຮໂລດ)

**22-25.** ຄວາມຕາຍຂອງພະເຢຊູມີຢູ່ 4 ແງ່ ຄືແງ່ໃດແດ່?
(ໄຊຊະນະ... ໄຖ່ເຮົາຄືນ... ຖະຫວາຍຕົວເປັນເຄື່ອງບູຊາ... ຖືກໂທດເຮົາ)